## ອຸດໜູນບຳນານ

1. ອາຍຸຄົບກະສຽນ 60 ປີຂຶ້ນໄປ (ສຳລັບເພດຍິງສະໝັກໃຈອອກວຽກເພື່ອຮັບບຳນານກ່ອນໄດ້ອາຍຸຕ້ອງບໍ່ຫຼຸດ 55 ປີ).

2. ປີປະກັນຕົນ 15 ປີ ຫຼື ຈ່າຍເງິນສົມທົບ 180 ເດືອນຂຶ້ນໄປ.

3. ຜູ້ທີ່ເຂົ້າປະກັນສັງຄົມກ່ອນວັນທີ 1 ຕຸລາ 2014 ມີປີປະກັນຕົນຢ່າງໜ້ອຍ 5 ປີ ຫຼື 60 ເດືອນຂຶ້ນໄປກໍສາມາດຮັບໄດ້.

<u>ສິດທີ່ຈະໄດ້ຮັບຄື:</u>

- ຮັບເງິນບຳນານເປັນລາຍເດືອນ.
- ຮັບສິດປິ່ນປົວສຸຂະພາບ.
- ຮັບເງິນອຸດໜູນເສຍຊີວິດ.
- ຮັບເງິນອຸດໜູນສະມາຊິກຄອບຄົວ.

ກໍລະນີຜູ້ປະກັນຕົນທີ່ອາຍຸຄົບກະສຽນບຳນານ ແຕ່ຈ່າຍເງິນສົມທົບບໍ່ຄົບຕາມເງື່ອນໄຂຈະໄດ້ຮັບເງິນອຸດໜູນບຳເນັດເທື່ອດຽວ.

(ສຳລັບຜູ້ທີ່ຄົບເງື່ອນໄຂຮັບບຳນານບໍ່ສາມາດຂໍຮັບເງິນອຸດໜູນບຳເນັດເທື່ອດຽວ)

ສຳລັບສະມາຊິກປະກັນສັງຄົມທີ່ເປັນຄົນຕ່າງປະເທດເມື່ອສິ້ນສຸດສັນຍາແຮງງານ ແລະ ຈະກັບປະເທດຕົນເອງກໍສາມາດມາຂໍຮັບອຸດໜູນບຳເນັດເທື່ອດຽວໄດ້ເທົ່າກັບ 1,5 ເດືອນຂອງເງິນເດືອນປະກັນຕົນສະເລ່ຍ 60 ເດືອນສຸດທ້າຍ ຄູນ ປີປະກັນຕົນ.

## ອຸດໜູນເສຍຊີວິດ

ແມ່ນການສະໜອງເງິນອຸດໜູນໃຫ້ກັບຜູ້ປະກັນຕົນ ຫຼື ຄອບຄົວໃນກໍລະນີທີ່ມີການເສຍຊີວິດ ຕ້ອງມີໜັງສືຢັ້ງຢືນຕາມລະບຽບການ.

1. ຜູ້ປະກັນຕົນເສຍຊີວິດ ຈະໄດ້ຮັບເງິນອຸດໜູນເທົ່າກັບ 15 ເດືອນ ຂອງເງິນເດືອນປະກັນຕົນສະເລ່ຍ 6 ເດືອນສຸດທ້າຍ, ເງິນອຸດໜູນບຳນານ ຫຼື ເງິນອຸດໜູນເສຍກຳລັງແຮງງານເດືອນສຸດທ້າຍ ເປັນຈຸດເລີ່ມຕົ້ນ ແລະ ເພີ່ມຕາມປີປະກັນຕົນ. ຜູ້ທີ່ມີປີປະກັນຕົນເກີນ 1 ປີ ຫາ 6 ປີ ຈະໄດ້ເພີ່ມປີລະ 1 ເດືອນ ນັບແຕ່ປີທີ 7 ຂຶ້ນໄປ ຈະໄດ້ເພີ່ມອີກ ປີລະ 0,5 ເດືອນ.

2. ຄູ່ສົມລົດເສຍຊີວິດໄດ້ຮັບ 6 ເດືອນ ຂອງເງິນເດືອນຜູ້ປະກັນຕົນ.

3. ລູກຕ່ຳກວ່າ 18 ປີ ເສຍຊີວິດ ໄດ້ຮັບ 3 ເດືອນ ຂອງເງິນປະກັນຕົນພໍ່ ຫຼື ແມ່.

**ເງື່ອນໄຂ:** ຈ່າຍເງິນສົມທົບ 1 ເດືອນ ຍ້ອນອຸປະຕິເຫດແຮງງານ ແລະ ຈ່າຍເງິນສົມທົບ 3 ເດືອນຂຶ້ນໄປ ຍ້ອນອຸປະຕິເຫດອື່ນ ຫຼື ພະຍາດທົ່ວໄປ



## ອຸດໜູນສະມາຊິກຄອບຄົວ

ສະມາຊິກຄອບຄົວຈະໄດ້ຮັບອຸດໜູນນີ້ ເມື່ອຜູ້ປະກັນຕົນ, ຜູ້ຮັບບຳນານ ແລະ ຜູ້ຮັບອຸດໜູນເສຍກຳລັງແຮງງານ ເສຍຊີວິດ ຊຶ່ງໄດ້ຈ່າຍເງິນສົມທົບເຂົ້າກອງທຶນປະກັນສັງຄົມ 5 ປີ ຂຶ້ນໄປ.

<u>ເງື່ອນໄຂຜູ້ທີ່ຈະໄດ້ຮັບ ມີດັ່ງນີ້:</u>

1. ຜົວອາຍຸ 60 ປີ, ເມຍອາຍຸ 55 ປີ ຂຶ້ນໄປມີລາຍຮັບບໍ່ປົກກະຕິ ແລະ ບໍ່ໄດ້ຮັບອຸດໜູນໃດໜຶ່ງນຳປະກັນສັງຄົມຈະໄດ້ຮັບເງິນອຸດໜູນເປັນລາຍເດືອນ 30% ຂອງເງິນເດືອນຜູ້ປະກັນຕົນ.

2. ລູກອາຍຸຕ່ຳກວ່າ 18 ປີ ໄດ້ຮັບ 20% ຕໍ່ລູກ 1 ຄົນ ຖ້າລູກຫຼາຍຄົນສູງສຸດບໍ່ເກີນ 60 %).

3. ກໍລະນີຜູ້ປະກັນຕົນທີ່ເປັນລູກໂທນ (ໂສດ) ທີ່ເບິ່ງແຍງພໍ່ແມ່ ຫາກເສຍຊີວິດ, ພໍ່ ອາຍຸກະສຽນ 60 ປີ ຫຼື ແມ່ ອາຍຸກະສຽນ 55 ປີ ຂຶ້ນໄປຊຶ່ງມີລາຍຮັບບໍ່ປົກກະຕິ ຈະໄດ້ຮັບ 30% ຂອງເງິນເດືອນຜູ້ປະກັນຕົນ.

- <u>ສິດທີ່ຈະໄດ້ຮັບ:</u>

1. ຮັບເງິນອຸດໜູນເປັນລາຍເດືອນ.
2. ຮັບສິດປິ່ນປົວສຸຂະພາບ.
3. ຮັບເງິນອຸດໜູນເສຍຊີວິດ.

## ອຸດໜູນວ່າງງານ

ຜູ້ປະກັນຕົນຈະໄດ້ຮັບເງິນອຸດໜູນວ່າງງານ ເທົ່າກັບ 60% ຂອງເງິນເດືອນປະກັນຕົນ. ເງິນອຸດໜູນດັ່ງກ່າວຈະໄດ້ຮັບ 3 ເດືອນຂຶ້ນໄປອີງຕາມໄລຍະປີປະກັນຕົນສູງສຸດບໍ່ເກີນ 12 ເດືອນ ແລະ ຕ້ອງມີເງື່ອນໄຂຄື:

1. ຈ່າຍເງິນສົມທົບ 12 ເດືອນຂຶ້ນໄປ.
2. ວ່າງງານຍ້ອນລົ້ມລະລາຍ, ຢຸດເຊົາກິດຈະການ, ສິ້ນສຸດໂຄງການຊ່ວຍເຫຼືອລ້າເພື່ອການພັດທະນາ.
3. ວ່າງງານຍ້ອນຢຸດກິດຈະການຊົ່ວຄາວຈາກຜົນກະທົບໄພພິບັດ.
4. ວ່າງງານຍ້ອນຫຼຸດຈຳນວນແຮງງານ ຫຼື ລະດົມໃຫ້ອອກວຽກ.
5. ມີເອກະສານຢັ້ງຢືນຈາກຫ້ອງການພ່ອຍແຮງງານທີ່ຖືກຕ້ອງ.
6. ວ່າງງານ 30 ວັນຂຶ້ນໄປມີການຢັ້ງຢືນຈາກພາກສ່ວນກ່ຽວຂ້ອງ.
7. ມີສຸຂະພາບແຂງແຮງ ແລະ ສາມາດກັບຄືນສູ່ຕະຫຼາດແຮງງານໄດ້

ນອກຈາກທີ່ໄດ້ກຳນົດນີ້ແລ້ວແມ່ນຈະບໍ່ຖືເປັນເງື່ອນໄຂຮັບອຸດໜູນວ່າງງານ.



**ກະຊວງແຮງງານ ແລະ ສະຫວັດດີການສັງຄົມ**

**ອົງການປະກັນສັງຄົມແຫ່ງຊາດ**




# ການອຸດໜູນປະກັນສັງຄົມ ສຳລັບພາກ ວິສາຫະກິດ

ຕາມກົດໝາຍວ່າດ້ວຍການປະກັນສັງຄົມ
ສະບັບເລກທີ 54/ສພຊ, ລົງວັນທີ 27 ມິຖຸນາ 2018.

**ສາຍດ່ວນ**

**1508**

ປະກັນສັງຄົມ ສະສົມທຶນ ຄືນຄວາມສຸກ ຊີວິດໝັ້ນຄົງ

ການປະກັນສັງຄົມແມ່ນການຮັບປະກັນໃຫ້ຜູ້ປະກັນຕົນ ແລະ ສະມາຊິກຄອບຄົວໄດ້ຮັບການອຸດໜູນຈາກກອງທຶນປະກັນສັງຄົມ ເພື່ອຄ້ຳປະກັນການດຳລົງຊີວິດຂັ້ນພື້ນຖານ ເມື່ອມີການປິ່ນປົວສຸຂະພາບ, ເກີດອຸປະຕິເຫດແຮງງານ ຫຼື ພະຍາດອາຊີບ, ອອກລູກ, ປ່ອຍການ, ເສຍກຳລັງແຮງງານ, ບຳນານ, ເສຍຊີວິດ, ອຸດໜູນສະມາຊິກຄອບຄົວ ແລະ ວ່າງງານ ຕາມເງື່ອນໄຂທີ່ກຳນົດໄວ້ໃນກົດໝາຍ.

ການເປັນສະມາຊິກກອງທຶນປະກັນສັງຄົມຜູ້ໃຊ້ແຮງງານ ແລະ ຜູ້ອອກແຮງງານ ຈະຕ້ອງປະຕິບັດພັນທະໂດຍການຈ່າຍເງິນສົມທົບເຂົ້າກອງທຶນປະກັນສັງຄົມຕາມອັດຕາດັ່ງນີ້:

| | |
|---|---|
| ຜູ້ໃຊ້ແຮງງານສົມທົບ | 6 %. |
| ຜູ້ອອກແຮງງານສົມທົບ | 5,5 %. |
| ລວມທັງໝົດ | 11,5 %. |

**ສະມາຊິກປະກັນສັງຄົມ**
**ຊຶ່ງຈະໄດ້ຮັບຜົນປະໂຫຍດ ດັ່ງຕໍ່ໄປນີ້:**

## ອຸດໜູນອຸປະຕິເຫດແຮງງານ ຫຼື ພະຍາດອາຊີບ



ປະກັນສັງຄົມຈະໃຫ້ການຄຸ້ມຄອງຜູ້ອອກແຮງງານນັບຕັ້ງແຕ່ຈ່າຍເງິນສົມທົບ 1 ເດືອນຂຶ້ນໄປ ແລະ ຂຶ້ນທະບຽນຢ່າງຖືກຕ້ອງກັບປະກັນສັງຄົມ, ໃນກໍລະນີເກີດອຸປະຕິເຫດຍ້ອນງານຈະໄດ້ຮັບສິດປິ່ນປົວທາງການແພດ, ອຸດໜູນປ່ອຍການ, ອຸດໜູນເສຍກຳລັງແຮງງານ, ອຸດໜູນເສຍຊີວິດ ແລະ ເງິນອຸດໜູນສະມາຊິກຄອບຄົວຕາມເງື່ອນໄຂທີ່ກຳນົດໄວ້ໃນກົດໝາຍປະກັນສັງຄົມ.

ຜູ້ເສຍກຳລັງແຮງງານປະເພດ 1 ແຕ່ 81%-100%ຈຳເປັນຕ້ອງມີຜູ້ດູແລປະກັນສັງຄົມຈ່າຍອຸດໜູນຜູ້ດູແລໃຫ້ເປັນລາຍເດືອນ.

## ອຸດໜູນປະກັນສຸຂະພາບ

ຜູ້ປະກັນຕົນ ທີ່ຈ່າຍເງິນສົມທົບເຂົ້າກອງທຶນປະກັນສັງຄົມ ຄົບ 3 ເດືອນຂຶ້ນໄປ ສາມາດໃຊ້ບັດປະກັນສັງຄົມເຂົ້າຮັບການປິ່ນປົວສຸຂະພາບໂດຍບໍ່ເສຍຄ່າ ແລະ ສາມາດນຳໃຊ້ໄດ້ຕື່ມ 3 ເດືອນ ພາຍຫຼັງທີ່ມີການຢຸດຈ່າຍເງິນສົມທົບ. ຜູ້ເກີດສິດປະກັນສັງຄົມ ຊຶ່ງລວມທັງຜູ້ປະກັນຕົນ, ຄູ່ສົມລົດ ແລະ ລູກ ທີ່ມີອາຍຸບໍ່ເກີນ 18 ປີ (ຖ້າຍັງຮຽນຮອດ 23 ປີ), ລູກທີ່ພິການມາແຕ່ກຳເນີດ ແມ່ນໄດ້ຮັບສິດນຳໃຊ້ບັດປະກັນສັງຄົມເຂົ້າໃນການປິ່ນປົວສຸຂະພາບຕະຫຼອດຊີວິດ, ການ



ນຳໃຊ້ບັດປະກັນສັງຄົມ ຕ້ອງຖືຄູ່ກັບບັດປະຈຳຕົວ ຫຼື ປຶ້ມສຳມະໂນຄົວ;

ຜູ້ເກີດສິດປິ່ນປົວໃນລະບົບປະກັນສັງຄົມຈະຕ້ອງໄດ້ເລືອກໂຮງໝໍທີ່ຢູ່ໃກ້ ແລະ ສະດວກ ເພື່ອຮັບບໍລິການປິ່ນປົວສຸຂະພາບ;



ກໍລະນີກວດເຂດນອກ ຫຼື ສຸກເສີນ ທີ່ບໍ່ໄດ້ນອນໂຮງໝໍ ຕ້ອງໄດ້ເຂົ້າຮັບການບໍລິການທາງການແພດຢູ່ໂຮງໝໍທີ່ເລືອກ.

- ກໍລະນີເຈັບກະທັນຫັນ (ສຸກເສີນ) ຫຼື ການປິ່ນປົວທີ່ໄດ້ນອນໂຮງໝໍ ແມ່ນສາມາດຮັບການບໍລິການປິ່ນປົວໄດ້ທຸກໂຮງໝໍຂອງລັດ ໃນຂອບເຂດທົ່ວປະເທດ;
- ຖ້າໄປກວດເຂດນອກໃນເວລານອກໂມງການ ແມ່ນຈະໄດ້ເສຍຄ່າທຳນຽມການບໍລິການຂອງໂຮງໝໍ.

ກໍລະນີມີບັນຫາກ່ຽວກັບການບໍລິການທາງການແພດ ຫຼື ບໍ່ມີຊື່ໃນຖານຂໍ້ມູນຂອງໂຮງໝໍ ສາມາດໂທພົວພັນໄດ້ທີ່ເບີ: **1509**

ຫຼື **020 5434 6222, 020 5548 9030**

## ອຸດໜູນອອກລູກ

ແມ່ນການສະໜອງເງິນໃຫ້ກັບຜູ້ປະກັນຕົນເພດຍິງ ຫຼັງເກີດລູກຕາມໄລຍະເວລາທີ່ໄດ້ກຳນົດໄວ້ໃນລະບຽບການ ເພື່ອພັກຜ່ອນຟື້ນຟູສຸຂະພາບ ແລະ ລ້ຽງດູລູກນ້ອຍ.



1. ຈ່າຍເງິນສົມທົບ 6 ເດືອນ ແລະ ຖືພາ 2 ເດືອນຂຶ້ນໄປ, ເມື່ອອອກລູກ, ຫຼຸລູກ ຫຼື ລູກຕາຍໃນທ້ອງ ໄດ້ຮັບເງິນບຳເນັດ 60% ຂອງເງິນເດືອນປະກັນຕົນຕໍ່ລູກ 1 ຄົນ ກໍລະນີລູກແຝດຄູນຕາມຈຳນວນລູກ (ສະເພາະຜູ້ປະກັນຕົນຊາຍ ທີ່ເມຍບໍ່ແມ່ນຜູ້ປະກັນຕົນ ຈະໄດ້ຮັບເງິນບຳເນັດລູກເຊັ່ນກັນ).
2. ຈ່າຍເງິນສົມທົບ 9 ເດືອນຂຶ້ນໄປຈະໄດ້ຮັບເງິນອຸດໜູນອອກລູກ 80 % ຂອງເງິນເດືອນປະກັນຕົນ ຄິດໄລ່ໃຫ້ 3,5 ເດືອນ ແລະ ຮັບເງິນອຸດໜູນບຳເນັດລູກ 60% ຕໍ່ລູກ 1 ຄົນ.

## ອຸດໜູນປ່ອຍການ

ແມ່ນການສະໜອງເງິນທົດແທນການຂາດລາຍໄດ້ໃນໄລຍະເຈັບເປັນໂດຍອີງຕາມການຢັ້ງຢືນຂອງແພດທີ່ລະບຸມື້ພັກ ດັ່ງນີ້:



1. ປ່ອຍການຍ້ອນເກີດອຸປະຕິເຫດແຮງງານ.

ເງື່ອນໄຂ: ມອບເງິນສົມທົບ 1 ເດືອນຂຶ້ນໄປ.

- 6 ເດືອນທຳອິດຮັບ 80% ຂອງເງິນເດືອນປະກັນຕົນ.
- 6 ເດືອນສຸດທ້າຍຮັບ 70% ຂອງເງິນເດືອນປະກັນຕົນ.

2. ປ່ອຍການຍ້ອນບັນຫາສຸຂະພາບ ຫຼື ອຸປະຕິເຫດອື່ນໆ.

ເງື່ອນໄຂ: ມອບເງິນສົມທົບ 3 ເດືອນຂຶ້ນໄປ.

- 6 ເດືອນທຳອິດຮັບ 70% ຂອງເງິນເດືອນປະກັນຕົນ.
- 6 ເດືອນສຸດທ້າຍຮັບ 60% ຂອງເງິນເດືອນປະກັນຕົນ.

ຈະຄິດໄລ່ໃຫ້ຕາມຈຳນວນມື້ພັກຕັ້ງແຕ່ 1 ມື້ຂຶ້ນໄປ ຈົນຮອດ 1 ປີ ຖ້າຍັງບໍ່ສາມາດມາອອກແຮງງານໄດ້ ຕ້ອງໄດ້ຮັບການປະເມີນສຸຂະພາບຄືນເພື່ອພິຈາລະນາຮັບອຸດໜູນເສຍກຳລັງແຮງງານ.

## ອຸດໜູນເສຍກຳລັງແຮງງານ

ແມ່ນການສະໜອງເງິນອຸດໜູນໃນກໍລະນີຜູ້ປະກັນຕົນຂາດສະມັດຕະພາບແຮງງານ, ສູນເສຍອະໄວຍະວະ ຫຼື ເສຍອິງຄະໃດໜຶ່ງຍ້ອນປະສົບອຸປະຕິເຫດ ຫຼື ພະຍາດທົ່ວໄປ ປະກັນສັງຄົມຈະຄິດໄລ່ໃຫ້ຕາມລະດັບຕີລາຄາຈັດປະເພດ ແລະ ລະດັບການເສຍກຳລັງແຮງງານດັ່ງນີ້:

1. ເງື່ອນໄຂ: ຍ້ອນງານ ມອບເງິນສົມທົບ 1 ເດືອນຂຶ້ນໄປ.
2. ເງື່ອນໄຂ: ບໍ່ຍ້ອນງານ ມອບເງິນສົມທົບ 12 ເດືອນຂຶ້ນໄປ.

| ປະເພດ | ລະດັບສ່ວນຮ້ອຍ ເສຍກຳລັງແຮງງານ | ລະດັບສ່ວນຮ້ອຍ ເງິນອຸດໜູນ | ປະເພດ ເງິນອຸດໜູນ |
|---|---|---|---|
| 1 | 81-100% | 80% | ໄດ້ຮັບ ເງິນອຸດໜູນ ເປັນລາຍເດືອນ |
| 2 | 71-80% | 70% | |
| 3 | 61-70% | 60% | |
| 4 | 51-60% | 50% | |
| 5 | 41-50% | 40% | |
| 6 | 15-40% | → | ເທື່ອດຽວ |